**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ:**

**ນະໂຍບາຍສົ່ງເສີມເສດຖະກິດລາວ ເພື່ອເພີ່ມຜະລິດຕະພາບທຸລະກິດ ແລະ ການຈ້າງງານ**

**ບົດປະເມີນຂະແໜງການຄ້າ ແລະ ການລົງທຶນ**

**[ບົດສະຫລຸບຫຍໍ້]**

ເຊັ່ນດຽວກັນກັບປະເທດອື່ນໆໃນໂລກ, Covid-19 ໄດ້ສົ່ງຜົນກະທົບຢ່າງໜັກຕໍ່ກັບ ສປປ ລາວ ທີ່ຫາກໍເລີ່ມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 (2021-2025) ເພື່ອສືບຕໍ່ຜັນຂະຫຍາຍວິໄສທັດ 2030 ທີ່ເປັນພາລະກິດໃນການເພີ່ມລາຍຮັບຕໍ່ຫົວຄົນ ເປັນ 4 ເທົ່າ ຈາກປີ 2015. ພາຍໃຕ້ສະຖານະການທີ່ບໍ່ແນ່ນອນ, ຫາກວ່າ ສປປ ລາວ ນຳໃຊ້ບັນດາກະຊວງທົ່ວກົງຈັກລັດຖະບານ ຮ່ວມກັນສືບຕໍ່ດຳເນີນວຽກງານທີ່ໄດ້ຈັດຕັ້ງປະຕິບັດກ່ອນທີ່ຈະມີການລະບາດຂອງ Covid-19, ພ້ອມກັບນຳໃຊ້ຄວາມເຂັ້ມແຂງພາຍໃນປະເທດທີ່ມີຢູ່ໃນການສຸມໃສ່ຟື້ນຟູປະເທດ ແລະ ເດີນໜ້າສູ້ຊົນໃນການບັນລຸການເຕີບໂຕທີ່ຍືນຍົງໃນໄລຍະຍາວແລ້ວ, ເຊື່ອໝັ້ນວ່າ ສປປ ລາວ ຈະກາຍເປັນປະເທດທີ່ເຂັ້ມແຂງກວ່າເດີມ ພາຍຫຼັງສະຖານະການການລະບາດຂອງ Covid-19.

**ກ່ອນ Covid-19: ມີຄວາມຄືບໜ້າດີ**

ກ່ອນການກະທົບຂອງ Covid-19, ລັດຖະບານລາວ ໄດ້ເຮັດວຽກຢ່າງໃກ້ຊິດກັບທະນາຄານພັດທະນາອາຊີ ໃນການຈັດຕັ້ງປະຕິບັດບາງຂໍ້ສະເໜີຈາກການຊ່ວຍເຫລືອດ້ານວິຊາການ ກ່ຽວກັບນະໂຍບາຍເສດຖະກິດລາວ ເພື່ອສົ່ງເສີມຜະລິດຕະພາບທູລະກິດ ແລະ ການຈ້າງງານ (2018). ຕໍ່ກັບການປະຕິບັດວຽກງານດັ່ງກ່າວກໍ່ໄດ້ມີການເລີ່ມຕົ້ນທີ່ດີ ເຊິ່ງໃນເດືອນ ສິງຫາ 2019 ຄູ່ມືການສົ່ງເສີມການລົງທຶນກໍ່ໄດ້ຖືກສ້າງຂຶ້ນ ແລະ ໄດ້ມີການຈັດຝຶກອົບຮົມສຳລັບພະນັກງານສົ່ງເສີມການລົງທຶນ. ສຳລັບຂໍ້ສະເໜີດັ່ງກ່າວແມ່ນຍັງສາມາດນຳໃຊ້ໄດ້ ແລະ ຄວນຖືກຈັດຕັ້ງປະຕິບັດໄປຄຽງຄູ່ກັນກັບວຽກງານການຟື້ນຕົວ:




*ທີ່ປຶກສາຈະໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອໃນການຈັດຕັ້ງປະຕິບັດ
**ທີ່ປຶກສາອາດຈະໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອໃນການຈັດຕັ້ງປະຕິບັດ

**ຫລັງ Covid-19: ການຟື້ນຕົວ ແລະ ໄລຍະຟື້ນຟູເສດຖະກິດ**

ມາດຕະການອັນຮີບດ່ວນໃນການຟື້ນຟູ ຄວນເລັງໃສ່ຂະແໜງການທີ່ໄດ້ຮັບຜົນກະທົບຢ່າງໜັກຈາກ Covid-19:

- ຕ່ອງໂສ້ການສະໜອງ: ມາດຕະການຮັກສາສະຖຽນລະພາບຕ່ອງໂສ້ການສະໜອງຕ້ອງໄດ້ຖືກຈັດຕັ້ງປະຕິບັດ ເຊັ່ນ: ການເຂົ້າໄປມີສ່ວນຮ່ວມ ຫຼື ເຂົ້າຫາຜູ້ສະໜອງທີ່ມີຢູ່ ແລະ ຜູ້ສະໜອງລາຍໃຫມ່, ເພີ່ມປະສິດທິພາບຂອງໂລຈິສຕິກ ແລະ ການຜະລິດ, ແລະ ບໍລິຫານຈັດການສາງ ແລະ ອຸປະສົງ.
- ການທ່ອງທ່ຽວ, ການຜະລິດ: ເພີ່ມມາດຕະການກະຕຸ້ນການທ່ອງທ່ຽວ, ສະໜອງນະໂຍບາຍ ແລະ ແຮງຈູງໃຈເຊັ່ນ: ການຜ່ອນຜັນດ້ານອາກອນ, ການເລື່ອນໄລຍະເວລາການຈ່າຍອາກອນ, ເລື່ອນການຈ່າຍຄ່ານຳໃຊ້ທີ່ດິນ ແລະ ຫລຸດຄ່າໄຟຟ້າ ແລະ ຄ່າບໍລິການອິນເຕີເນັດ.
- ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ: ສ້າງແຮງຈູງໃຈດ້ານທຶນຮອນທີ່ເປັນວັດຖຸ ແລະ ບໍ່ແມ່ນວັດຖຸ, ຫລຸດຄ່າໄຟຟ້າ ແລະ ຄ່າບໍລິການອິນເຕີເນັດ.
- ການຄ້າພາຍໃນ ແລະ ຕ່າງປະເທດ: ສົ່ງເສີມສາຍພົວພັນການຄ້າກັບຄູ່ຄ້າໃໝ່, ລະບຸຂະແໜງການຄ້າໃໝ່, ສົ່ງເສີມການບໍລິໂພກພາຍໃນ

ການປ່ຽນແປງວິຖີຊີວິດ, ເສດຖະກິດ-ສັງຄົມ ເນື່ອງຈາກສະຖານະການໂລກລະບາດໄດ້ເຮັດໃຫ້ເທັກໂນໂລຢີ ແລະ ຊ່ອງທາງດິຈິຕອນມີບົດບາດຂຶ້ນ, ເຊິ່ງເຄື່ອງມືດັ່ງກ່າວໄດ້ຊ່ວຍໃນການຂັບເຄື່ອນຂອງຫລາຍໆປະເທດ ເຖິງວ່າຈະມີການປິດປະເທດ ແລະ ຕ່ອງໂສ້ການສະໜອງຈະຢຸດສະງັກ. ດັ່ງນັ້ນ, ສປປ ລາວ ຕ້ອງໄດ້ເລີ່ມກະກຽມຕົນເອງໃຫ້ພ້ອມກັບຍຸກດິຈິຕອນທີ່ມີການພັດທະນາຢູ່ຢ່າງບໍ່ຢຸດຍັ້ງໃນອະນາຄົດ. ຖ້າບໍ່ດັ່ງນັ້ນ, ສປປ

ລາວ ມີຄວາມສ່ຽງທີ່ຈະປະສົບບັນຫາຖ້າເກີດມີການລະບາດອີກຮອບສອງ ຫລື ບໍ່ສາມາດປັບຕົວເຂົ້າກັບວິຖີຊີວິດແບບໃໝ່ ແລະ ກໍ່ອາດຈະກາຍເປັນປະເທດທີ່ຫຼ້າຫຼັງເມື່ອທຽບກັບປະເທດອື່ນໆ.

ໃນຄວາມເປັນຈິງແລ້ວ Covid-19 ອາດຈະບໍ່ໄດ້ຖືກກຳຈັດໃນອະນາຄົດອັນໃກ້ນີ້, ສະນັ້ນ ລັດຖະບານລາວ ບໍ່ຄວນທີ່ຈະລໍຖ້າໃຫ້ສຳເລັດການຟື້ນຕົວກ່ອນ ແລ້ວຈຶ່ງຈະກັບຄືນໄປສຸມໃສ່ການສ້າງເສດຖະກິດໃຫ້ເຂັ້ມແຂງ. ນະປະຈຸບັນນີ້, ສປປ ລາວ ຕ້ອງ ໄດ້ເລີ່ມຈັດຕັ້ງປະຕິບັດຫຼາຍໆວຽກງານທີ່ຕິດພັນກັບແຜນພັດທະນາເສດຖະກິດສັງຄົມທີ່ໄດ້ດຳເນີນມາກ່ອນໜ້ານີ້. ສິ່ງສຳຄັນທີ່ສຸດໃນປະຈຸບັນແມ່ນປະເທດລາວຕ້ອງສ້າງຄວາມເຂັ້ມແຂງໃຫ້ພາກທຸລະກິດພາຍໃນ, ໝູນໃຊ້ເສັ້ນທາງລົດໄຟລາວ-ຈີນ ໃຫ້ເກີດປະໂຫຍດສູງສຸດ ແລະ ກະຕຸ້ນພາກກະສິກຳໃນການສ້າງຄວາມເຂັ້ມແຂງໃຫ້ສິນຄ້າກະສິກຳໃຫ້ດີກວ່າສິນຄ້າຈາກປະເທດເພື່ອນບ້ານ ແລະ ສ້າງແວດລ້ອມທີ່ເອື້ອອຳນວຍຕໍ່ການການເຕີບໂຕແບບຍືນຍົງ.

1) **ສ້າງຄວາມເຂັ້ມແຂງຂອງທຸລະກິດພາຍໃນ:** ເນື່ອງຈາກຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ກວມເອົາອັດຕາສ່ວນຫຼາຍກວ່າ 90% ຂອງທຸລະກິດທີ່ຈົດທະບຽນຢູ່ ສປປ ລາວ, ສະນັ້ນ ຄວາມພະຍາຍາມຂອງລັດຖະບານລາວ ຕ້ອງຮັບປະກັນວ່າ ທຸລະກິດດັ່ງກ່າວ ບໍ່ພຽງແຕ່ຈະຢູ່ລອດ ແຕ່ຍັງຕ້ອງມີການພັດທະນາທີ່ຍືນຍົງ. ເພື່ອບັນລຸໄດ້ຕາມແຜນ, ສິ່ງທີ່ລັດຖະບານຕ້ອງໄດ້ປັບປຸງປະກອບມີ: ປັບປຸງການເຂົ້າເຖິງແຫລ່ງທຶນຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຂະບວນການທີ່ສະດວກຂຶ້ນ, ມີເງື່ອນໃນການຂໍກູ້ເງິນທີ່ຍືດຢຸ່ນຂຶ້ນ ແລະ ມີການສ້າງລະບົບການເງິນທີ່ເຂັ້ມແຂງ. ເພື່ອຮັບມືກັບສິ່ງທ້າທາຍຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການແຂ່ງຂັນກັບສາກົນ, ການລວມກຸ່ມທຸລະກິດອາດຖືກສ້າງຕັ້ງຂຶ້ນເພື່ອຮວບຮວມແຫລ່ງຊັບພະຍາກອນ ແລະ ແບ່ງປັນຂໍ້ມູນ. ນອກຈາກສົ່ງເສີມຈຸນລະວິສາກະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງແລ້ວ, ຍັງມີມາດຕະການອື່ນທີ່ສາມາດສົ່ງເສີມເຂດເສດຖະກິດພິເສດຂອງ ສປປ ລາວ ໃຫ້ມີການພັດທະນາ. ສິ່ງນີ້ ສາມາດບັນລຸໄດ້ໂດຍການປະສານງານເປັນປະຈຳໃນຂໍ້ໄດ້ປຽບຂອງບັນດາເຂດເສດຖະກິດພິເສດເຫລົ່ານັ້ນ. ການສົ່ງເສີມວຽກເຮັດງານທຳພາຍໃນໃນເຂດເສດຖະກິດພິເສດ ບໍ່ພຽງແຕ່ເປັນການຫລຸດຜ່ອນການວ່າງງານ ແຕ່ຍັງສາມາດຍົກລະດັບຝີມືແຮງງານຄົນລາວໄດ້ອີກ. ສົ່ງເສີມການເຊື່ອມໂຍງຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ເຂົ້າສູ່ເຄືອຄ່າຍຕ່ອງໂສ້ການສະ ໜອງຂອງເຂດເສດຖະກິດພິເສດ ຈະເປັນສ້າງພືນໄດ້ຮັບອັນດີໃນການກະຕຸກຊຸກຍູ້ທຸລະກິດພາຍໃນ ແລະ ການສ້າງວຽກເຮັດງານທຳ, ໃນທາງກັບກັນ ກໍຈະເປັນການກະຕຸ້ນການດຶງດູດຂອງເຂດເສດຖະກິດພິເສດ.

2) **ການສ້າງຈຸດແຂງ:** ໂອກາດທີ່ສຳຄັນສຳລັບປະເທດລາວ ໃນການສ້າງຈຸດແຂງເມື່ອທຽບກັບປະເທດເພື່ອນບ້ານ ແມ່ນການນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ ທີ່ຈະສຳເລັດໃນມໍ່ໆນີ້ໃຫ້ເກີດປະໂຫຍດສູງສຸດ. ເພື່ອຮັບມືກັບການໄຫລເຂົ້າຂອງສິນຄ້າທີ່ມີມູນຄ່າຕ່ຳ, ປະເທດລາວ ສາມາດຮັບມືໂດຍວິທີການປະສົມປະສານ ແລະ ແລກປ່ຽນ ລະຫວ່າງຄວາມຕ້ອງການສູງຂອງສິນຄ້າກະສິກຳ, ໝາກໄມ້ ແລະ ຊີ້ນສັດ ຈາກປະເທດຈີນ ແລະ ຜະລິດຕະພັນກາເຟ, ຊາ ແລະ ໝາກງາຂອງປະເທດລາວ. ສປປ ລາວ ຍັງສາມາດສ້າງເຂດ

ໂລຈິສຕິກ ແລະ ລະບົບຕ່ອງໂສ້ການສະໜອງຕາມແລວທາງລົດໄຟທີ່ສາມາດເຊື່ອມຕໍ່ໄດ້ ຈຶ່ງຈະເຮັດໃຫ້ຕົນເອງກາຍເປັນສູນກາງລະບົບຂົນສົ່ງ ແລະ ຮັບປະກັນວ່າທຸລະກິດຂອງປະເທດລາວມີຄວາມສາມາດທີ່ຈະຜ່ານຜ່າອຸປະສັກທີ່ບໍ່ແມ່ນພາສີ ເພື່ອບັນລຸໃນການສົ່ງອອກໄປປະເທດຈີນ ແລະ ປະເຊີນກັບອຸປະສົງທີ່ມີສູງຂອງຈີນ. ນອກນີ້, ປະເທດລາວ ຍັງສາມາດປັບປຸງຄວາມໄດ້ປຽບໃນການແຂ່ງຂັນ ໂດຍການຂະຫຍາຍທ່າແຮງດ້ານກະສິກຳທີ່ມີຢູ່ ດ້ວຍການເພີ່ມຜົນຜະລິດສິນຄ້າກະສິກຳຄຸນນະພາບສູງເຊັ່ນ: ອາຫານປອດສານພິດ ແລະ ພືດເສດຖະກິດທີ່ມີມູນຄ່າສູງ, ການເພີ່ມການລົງທຶນໃນເທັກໂນໂລຢີທີ່ທັນສະໄໝ ແລະ ຝຶກຊາວກະສິກອນໃຫ້ນຳໃຊ້ເຄື່ອງມືດັ່ງກ່າວ ເພື່ອໃຫ້ໄດ້ຜະລິດຕະພັນທີ່ມີຄຸນນະພາບ ແລະ ຄວາມປອດໄພຕາມມາດຕະຖານສາກົນ. ພ້ອມນີ້, ກໍ່ໃຫ້ມີການຈັບຄູ່ນັກທຸລະກິດກັບຊາວກະສິກອນພ້ອມກັບຮັບປະກັນວ່າການຜະລິດແມ່ນພຽງພໍກັບຄວາມຕ້ອງການພາຍໃນ (ການຄ້ຳປະກັນສະບຽງອາຫານ) ກ່ອນທີ່ຈະສົ່ງອອກໃນສ່ວນທີ່ເຫລືອ. ສປປ ລາວ ສາມາດສວຍໃຊ້ຊ່ອງວ່າງດ້ານນະໂຍບາຍທີ່ມີຢູ່ ໂດຍການກຳນົດເປົ້າໝາຍ ແລະ ສົ່ງເສີມການເຕີບໂຕອຸດສາຫະກຳກະສິກຳປອດສານພິດຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ບໍ່ສະເພາະແຕ່ຊ່ວງໄລຍະການຜະລິດ.(ເບິ່ງເອກະສານຊ້ອນທ້າຍ 4 ຂອງບົດປະເມີນຂະແໜງການຄ້າ ແລະ ການລົງທຶນ)

3) **ສ້າງແວດລ້ອມທີ່ເອື້ອອຳນວຍໃນການຫັນເປັນສາກົນ:** ການສ້າງເສດຖະກິດດີຈິຕອນແມ່ນປັດໃຈທີ່ສຳຄັນ ແລະ ລັດຖະບານລາວ ຄວນນຳພາເປັນແບບຢ່າງ ໂດຍການນຳໃຊ້ລະບົບດີຈີຕອນໃນລະບົບລັດຖະກອນ ແລະ ຕາມດ້ວຍການຮ່າງດຳລັດວ່າດ້ວຍການຄ້າທາງອີເລັກໂທຣນິກ ໂດຍກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ. ການສົ່ງເສີມການອຳນວຍຄວາມສະດວກທາງດ້ານການຄ້າກໍ່ມີຄວາມສຳຄັນເຊັ່ນກັນເພື່ອການຮັບມືກັບອຸປະສັກທີ່ບໍ່ແມ່ນພາສີທີ່ຂ້ອນຂ້າງສູງ ຕໍ່ກັບການຄ້າ ແລະ ການເຊື່ອມຈອດຂອງຂະແໜງຂົນສົ່ງ ກັບ ໂລຈິສຕິກ.

**ການບັນລຸການເຕີບໂຕແບບຍືນຍົງ ໄລຍະຍາວ**

ເນື່ອງຈາກການມີພື້ນຖານທາງເສດຖະກິດທີ່ເຂັ້ມແຂງ, ສປປ ລາວ ຖືວ່າຍັງຢູ່ໃນລະດັບດີ ແລະ ຈະສາມາດສືບຕໍ່ກ້າວໄປທາງໜ້າໃນການຫລຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາໃນປີ 2024 ແລະ ບັນລຸການເຕີບໂຕແບບຍືນຍົງໄລຍະຍາວ. ສິ່ງທີ່ຄວນຈັດຕັ້ງປະຕິບັດ ລວມມີ:

A) **ການສວຍໃຊ້ກາລະໂອກາດດ້ານການຄ້າ ແລະ ການລົງທຶນ:** ກະແສເງິນຈາກການຄ້າ ແລະ ການລົງທຶນຈາກຈີນ, ໄທ ແລະ ຫວຽດນາມ ລວມເຂົ້າກັນແມ່ນຫລາຍກວ່າ 3 ທົບ ຂອງປະເທດຄູ່ຄ້າລາຍໃຫຍ່ຂອງລາວ. ເພື່ອຫລີກລ່ຽງການເອື່ອຍອີງກັບຄູ່ຄ້າຫລັກເຫລົ່ານີ້, ປະເທດລາວ ຄວນຊອກຊ່ອງທາງໃນການກະຈາຍການຄ້າ ແລະ ການລົງທຶນຂອງຕົນ. ດ້ານການຄ້າ, ປະເທດລາວ ອາດພິຈາລະນາຮັດແໜ້ນສາຍພົວພັນການຄ້າກັບອິນເດຍ ແລະ ອົດສະຕາລີ ແລະ ຊອກກາລະໂອກາດໃນຂະແໜງການອາຫານ,

ເຄື່ອງນຸ່ງຫົ່ມ ແລະ ເຄື່ອງປະດັບ, ແລະ ອຸປະກອນໄຟຟ້າ. ດ້ານການລົງທຶນ, ອາດຈະເບິ່ງ ສ ເກົາຫລີ ເພື່ອເປັນທາງເລືອກຂອງການດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ. ລັດຖະບານຄວນສ້າງຄວາມເຂັ້ມແຂງໃຫ້ຂະແໜງການທີ່ປ້ອນດ່ານໜ້າເຊັ່ນ: ການບໍລິການ, ຫັດຖະກຳ ແລະ ໂຮງແຮມ ແລະ ຮ້ານອາຫານ ເປັນຕົວເລືອກສຳລັບການລົງທຶນໂດຍກົງຈາກຕ່າງປະເທດ. ນອກຈາກນີ້, ການສົ່ງເສີມການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ຜ່ານລະບອບການລົງທຶນ ຈະຊ່ວຍຫລຸດຜ່ອນຄວາມກົດດັນດ້ານທຶນຮອນໃນການພັດທະນາໂຄງລ່າງພື້ນຖານ ແລະ ການບໍລິການສາທາລະນະຂອງ ສປປ ລາວ. ນອກຈາກການໝູນໃຊ້ຜົນປະໂຫຍດຈາກການພົວພັນສອງຝ່າຍແລ້ວ, ປະເທດລາວ ຄວນຈະໝູນໃຊ້ໂອກາດຈາກການເປັນສະມາຊິກຂອງອາຊຽນ ໂດຍສະເພາະສັນຍາການຮ່ວມມືການເດີນທາງທີ່ໃກ້ຈະສຳເລັດນີ້ ແລະ ຄຳໝັ້ນສັນຍາໃນສັນຍາການຮ່ວມມືເສດຖະກິດພາກພື້ນຮອບດ້ານໃນທ້າຍປີ 2020 ນີ້.

B) **ການປັບປຸງຄວາມສະດວກງ່າຍໃນການດຳເນີນທຸລະກິດ:** ເພື່ອໃຫ້ໄດ້ຄະແນນຊະນະຢ່າງໄວວາ ໃນການຂັບເຄື່ອນປະເທດລາວ ໃຫ້ເພີ່ມຂຶ້ນອີກລະດັບນຶ່ງ ຈາກອັນດັບທີ 154 (ໃນຈຳນວນ 190 ປະເທດ) ໃນປີ 2020, ປະເທດລາວ ຄວນພິຈາລະນາການກ□ານົດເປົ້າໝາຍຕົວຊີ້ວັດຄວາມສະດວກງ່າຍໃນການດຳເນີນທຸລະກິດ (a) ການເລີ່ມຕົ້ນທຸລະກິດ; (b) ການຊຳລະອາກອນ; ແລະ (c) ການຄ້າຂ້າມແດນ. ຂະບວນການປັບປຸງການຈັດອັນດັບ ຄວນຂັບເຄື່ອນໂດຍຟື້ນຟູຫ້ອງການບໍລິການປະຕູດຽວ ທີ່ໄດ້ສ້າງຕັ້ງຂຶ້ນໃນຂອບເຂດທົ່ວປະເທດລາວ ແລະ ຫ້ອງການບໍລິການປະຕູດຽວຂອງອົງການຄຸ້ມຄອງເຂດເສດຖະກິດພິເສດໃນສະຫວັນ-ເຊໂນເປັນມາດຖານ. ສິ່ງນີ້ ຕ້ອງຈັບມືກັບການປັບປຸງການບໍລິການຈັດສົ່ງຂອງຫ້ອງການບໍລິການປະຕູດຽວ ແລະ ພະນັກງານທີ່ຂັບເຄື່ອນວາລາການລົງທຶນ, ແລະ ສ້າງຕັ້ງການບໍລິການດູແລ. ນອກນີ້, ປະເທດລາວ ຄວນສືບຕໍ່ສ້າງຄວາມເຂັ້ມແຂງ ຍີ່ຫໍ້ ການລົງທຶນລາວ.

C) **ຊຸກຍູ້ການທົບທວນຄືຂໍ້ສະເໜີລະຫວ່າງຜູ້ມີສ່ວນຮ່ວມ:** ນອກຈາກຂອບຂອງກອງປະຊຸມທຸລະກິດລາວ, ຂໍ້ສະເໜີໂດຍກົງຈາກພາກເອກະຊົນ ຕ້ອງໄດ້ຮັບການພິຈາລະນາ ແລະ ເອົາເຂົ້າໃນກົນໄກການສ້າງນະໂຍບາຍທີ່ເຫັນວ່າເໝາະສົມ. ການສື່ສານລະຫວ່າງອົງການຜູ້ໃຫ້ທຶນ ເຊັ່ນ ທະນາຄານພັດທະນາອາຊີ, ບັນດາກະຊວງ, ບັນດາອົງການ ແລະ ພາກທຸລະກິດ ຍັງສາມາດທີ່ຈະປັບປຸງເພື່ອຫລຸດຜ່ອນຄວາມສັບສົນດ້ານຄວາມຮັບຜິດຊອບ ແລະ ການຕັດສິນບັນຫາຂອງກິດຈະກຳດ້ານການຄ້າ ແລະ ການລົງທຶນ. ການສື່ສານທີ່ຫລາຍຂຶ້ນຂອງວຽກງານທີ່ສຳເລັດທີ່ມີຢູ່ໃນປະຈຸບັນ ຍັງສາມາດທີ່ຈະນຳສະເໜີຫາສະພາແຫ່ງຊາດເພື່ອຮັບປະກັນດ້ານນິຕິກຳ ແລະ ໜ່ວຍງານບໍລິຫານເຮັດວຽກຮ່ວມກັນຢ່າງລາບລື້ນ.

D) **ສົ່ງເສີມການປະສານງານດ້ານນະໂຍບາຍ:** ການສ້າງອົງການປະສານງານ ຈະຊ່ວຍແກ້ໄຂບັນຫາໃນການເອົາຊະນະສິ່ງກີດຂວາງໃນການດຳເນີນງານຂອງວຽກງານສົ່ງເສີມການຄ້າ ແລະ ການລົງທຶນ. ຄຽງຄູ່ກັນນັ້ນ, ການຂາດການຕິດຕໍ່ ແລະ ການຊໍ້າຊ້ອນຂອງວຽກງານ ຕ້ອງໄດ້ຮັບການແກ້ໄຂຜ່ານຂະບວນການໄຫລຜ່ານທີ່ມີການອອກແບບດ້ານນະໂຍບາຍທີ່ເຂັ້ມແຂງ, ມີການແນະນຳໃນການຈັດຕັ້ງປະຕິບັດທີ່ຊັດເຈນ ແລະ ມີເປົ້າໝາຍໃນການຈັດຕັ້ງປະຕິບັດແຜນ. ກ□ານົດຕົວຊີ້ວັດໃນການດ□າເນີນງານທີ່ຊັດເຈນ,

ພັດທະນາກົນໄກຄວາມຮັບຜິດຊອບ ແລະ ການສ້າງດັດສະນີການແຂ່ງຂັນຂັ້ນແຂວງ ຈະຊ່ວຍເຕີມເຕັມຄວາມພະຍາຍາມໃນວຽກງານດັ່ງກ່າວ. ເພື່ອເປັນບ່ອນອີງໃນຄົ້ນຄວ້າໃນຕໍ່ໜ້າ, ສປປ ລາວ ອາດພິຈາລະນາສ້າງຕັ້ງໜ່ວຍງານຂ່າວກອງດ້ານເສດຖະກິດ ແລະ ຍຸດທະສາດ ເພື່ອສຶກສາຂໍ້ມູນພາຍໃນປະເທດໃນລວງເລິກດ້ານປະສິດທິພາບຂອງຂະແໜງການ ແລະ ຕິດຕາມຂໍ້ມູນຂ່າວສານຂອງປະເທດຄູ່ແຂ່ງ.

E) **ລົງທຶນໃນການສ້າງຂີດຄວາມສາມາດ:** ອີງຕາມໝາກຜົນຂອງກອງປະຊຸມຝຶກອົບຮົມການສ້າງຂີດຄວາມສາມາດ ໃນເດືອນສິງຫາ 2019, ລັດຖະບານລາວ ສາມາດພິຈາລະນາການເປີດຊຸດຝຶກອົບຮົມ ເພື່ອການພັດທະນາທັກສະລະຫວ່າງບັນດາພະແນກຂອງແຂວງດ້ວຍກັນ, ຜູ້ຕາງໜ້າຈາກສະຖານທູດລາວ, ພະນັກງານຫ້ອງການບໍລິການປະຕູດຽວ ແລະ ພະນັກງານກົມສົ່ງເສີມການລົງທຶນ ເພື່ອໂຄສະນາ ແລະ ຍົກບົດບາດລາວເປັນຕະຫລາດທີ່ໜ້າສົນໃຈສໍາລັບນັກລົງທຶນ. ອາດໃຊ້ວິທີການຫລາຍຮູບແບບ ລວມມີ (1) ການຕະຫລາດ ແລະ ສື່ສານຢ່າງມີປະສິດທິຜົນ; (2) ການເຂົ້າມາຂອງນັກລົງທຶນທີ່ຢູ່ໃນເປົ້າໝາຍ; (3) ການຄຸ້ມຄອງບັນຊີ; ແລະ (4) ການບໍລິການລູກຄ້າ.

**ອະນາຄົນໃນຕໍ່ໜ້າຂອງປະເທດລາວ: ເຂັ້ມແຂງຂຶ້ນເລື້ອຍໆ**

ໃນຂະນະທີ່ທົ່ວໂລກກໍາລັງຮັບມືກັບຜົນກະທົບຂອງ Covid-19, ສິ່ງທີ່ບໍ່ແນ່ນອນ ກໍຄືວິຖີຊີວິດແບບໃໝ່. ເຖິງຢ່າງໃດກໍຕາມ, ສິ່ງທີ່ແນ່ນອນກໍຄື ໂລກຍັງຄົງສືບຕໍ່ເຊື່ອມໂຍງກັນຢ່າງເລິກເຊິ່ງ ເຖິງວ່າຈະມີການປິດພາຍໃນປະເທດ. ການເຊື່ອມໂຍງນີ້ ເຮັດໃຫ້ມີການນໍາໃຊ້ເຄື່ອງມືດີຈີຕອນຫລາຍຂຶ້ນ ແລະ Covid-19 ໄດ້ເພີ່ມບົດບາດຂອງການນໍາໃຊ້ເຄື່ອງມືດັ່ງກ່າວໃນທົ່ວເສດຖະກິດໂລກ. ສະນັ້ນ, ສປປ ລາວ ຕ້ອງບໍ່ເບິ່ງແຕ່ມາດຕະການຟື້ນຟູແຕ່ຕ້ອງພິຈາລະນາປັບປຸງເພື່ອຈະເຮັດໃນຕໍ່ໜ້າມີການພັດທະນາ ແລະ ມີຄວາມທັນສະໄໝດ້ານເສດຖະກິດ. ສິ່ງດັ່ງກ່າວໄດ້ຮຽກຮ້ອງໃຫ້ມີການຈອດກ່ຽວກັນລະຫວ່າງໝາກຜົນທີ່ຈະໄດ້ຮັບ, ບັນດານະໂຍບາຍ ແລະ ບັນດາຂໍ້ລິເລີ່ມດ້ານເສດຖະກິດຂອງ ສປປ ລາວ ເພື່ອໃຫ້ປະສົບຜົນສໍາເລັດໃນການຈັດຕັ້ງປະຕິບັດ. ພ້ອມນີ້, ສປປ ລາວ ກໍ່ຕ້ອງເບິ່ງຕື່ມປະເທດອ້ອມຂ້າງເພື່ອເປັນມາດຖານ ແລະ ຮັບຮອງເອົາວິທີຈັດຕັ້ງປະຕິບັດທີ່ດີໃນເງື່ອນໄຂທີ່ເປັນເອກະລັກສະເພາະຂອງຕົນ. ນອກນີ້, ກົນໄກປະສານງານທີ່ມີປະສິດຜົນໃນທົ່ວກະຊວງ ກໍຮຽກຮ້ອງໃຫ້ມີການຮັບປະກັນວ່າ ປະເທດລາວ ມີການຕອບສະໜອງໄວ ແລະ ຢືດຢຸ່ນໃນການວາງແຜນນະໂຍບາຍ.

ເຖິງວ່າຈະມີການຊັກຊ້າຈາກຜົນກະທົບຂອງ Covid-19, ສປປ ລາວ ກໍຍັງຢູ່ໃນວາລະທີ່ສ□າຄັນໃນການບັນລຸຄາດໝາຍ ເພື່ອປະເທດຊາດ ແລະ ປະຊາຊົນ. ດ້ວຍໂຄງລ່າງທີ່ເຂັ້ມແຂງ, ເຄື່ອງມືທີ່ພ້ອມເພື່ອບັນລຸເປົ້າໝາຍ ແລະ ໄດ້ຮັບການສະໜັບສະໜູນທີ່ເຂັ້ມແຂງຈາກຄູ່ຮ່ວມໃນພາກພື້ນ ແລະ ສາກົນ, ອະນາຄົດທີ່ສົດໃສ ແລະ ຄວາມຈະເລີນຮຸ່ງເຮືອງໃນຕໍ່ໜ້າ ແມ່ນບໍ່ໄກເກີນເອື້ອມ.

. . . . .

# ເອກະສານເພີ່ມເຕີມ: ບົດສະຫລຸບຂອງບັນດາຂໍ້ສະເໜີ

